

# BUILDING NETWORKS
# BEING CHALLENGED

**ຕຳແໜ່ງ:** Operator Packer - ຜູ້ຄວບຄຸມເຄື່ອງຈັກແພັກເບຍ

Operator Palletiser - ຜູ້ຄວບຄຸມຈັກຫຍຸມເຄື່ອງລັງເຕັມ

**ພະແນກ:** ຜະລິດ

**ບ່ອນປະຈຳການ:** ໂຮງງານເບຍວຽງຈັນ

## ໜ້າທີ່ຮັບຜິດຊອບຫຼັກ:

- ຄວບຄຸມການຜະລິດ ໃຫ້ຖືກຕ້ອງຕາມຄຸນນະພາບ, ກວດເຊັກ ແລະ ບັນທຶກການຕັ້ງຄ່າຕ່າງໆ ໃຫ້ຢູ່ໃນມາດຕະຖານ, ກວດສອບຄຸນນະພາບຕາມໄລຍະ ແລະ ຕາມການກຳນົດທີ່ວາງອອກ.
- ຄວບຄຸມ ແລະ ບັນຊາເຄື່ອງຈັກໃນເຂດຮັບຜິດຊອບຂອງຕົນ ໃຫ້ສາມາດເຮັດວຽກໄດ້ຕາມມາດຕະຖານ ແລະ ຕາມແຜນການຜະລິດ ໃຫ້ມີປະສິດທິຜົນສູງສຸດ.
- ເປັນເຈົ້າການ ແລະ ຕັ້ງໜ້າປະຕິບັດ ຮັກສາຄວາມສະອາດ, ຄວາມເປັນລະບຽບຮຽບຮ້ອຍ, ກວດເຊັກການເຮັດວຽກຂອງອຸປະກອນຕ່າງໆ, ພ້ອມທັງຕື່ມນໍ້າມັນລໍ່ລື່ນຕ່າງໆ ໃນພື້ນທີ່ເຂດຮັບຜິດຊອບຂອງຕົນ.
- ຮັບຜິດຊອບ, ນຳພາ ແລະ ເຂົ້າຮ່ວມທຸກໆການສ້ອມແປງເຄື່ອງຈັກ ຫຼື ແກ້ໄຂສະພາບຜິດປົກກະຕິຕ່າງໆໃນເຂດຮັບຜິດຊອບຂອງຕົນໃຫ້ຢູ່ໃນສະພາບປົກກະຕິ ແລະ ໃຫ້ພ້ອມໃຊ້ງານຕະຫຼອດເວລາ
- ເປັນເຈົ້າການຮັບຜິດຊອບ ແລະ ຫຼຸດຜ່ອນການສູນເສຍໃນເຂດຂອງຕົນ, ຊຶ່ງລວມມີ ການສູນເສຍຜະລິດຕະພັນ, ການສູນເສຍວັດສະດຸການຜະລິດ, ການສູນເສຍພະລັງງານຕ່າງໆ
- ຕິດຕາມ, ກວດກາຈຳນວນ ແລະ ຄຸນນະພາບ, ແຫຼ່ງທີ່ມາຂອງວັດສະດຸການຜະລິດທີ່ນຳໃຊ້ໃນເຂດຂອງຕົນ
- ຕັ້ງໜ້າຢ່າງຫ້າວຫັນປະຕິດບັດວຽກງານ, ຊ່ວຍເຫຼືອທີມງານໃຫ້ວຽກງານສອດຄ່ອງ ແລະ ບັນລຸເປົ້າໝາຍທີ່ບໍລິສັດວາງອອກ.
- ປະຕິບັດວຽກການໃຫ້ສຳເລັດຕາມການມອບໝາຍຂອງຫົວໜ້າທີມ ແລະ ຫົວໜ້າສາຍງານຂອງຕົນ
- ຮັບປະກັນຄວາມປອດໄພໃນເວລາປະຕິບັດງານທັງຕໍ່ຕົນເອງ ແລະ ຕໍ່ສະພາບແວດລ້ອມການເຮັດວຽກ
- ປະຕິບັດຕາມກົດລະບຽບສຸຂະພາບ ແລະ ຄວາມປອດໄພທີ່ບໍລິສັດວາງອອກ

DIVERSE REPRESENTATION | EQUAL OPPORTUNITIES | INCLUSIVE CULTURE | BUSINESS PRIORITY

Lao Brewery | Carlsberg Group

## ຄຸນນະສົມບັດ:

- ຊັ້ນສູງ ຫລື ປະລິນຍາຕຣີສາຂາໄຟຟ້າ, ອີເລັກໂຕຣນິກ, ກົນຈັກ, ອຸດສະຫະກຳ, ການຜະລິດ ຫລື ສາຂາອື່ນໆທີ່ກ່ຽວຂ້ອງກັນ
- ນັກສຶກສາຈົບໃໝ່ສາມາດສະໝັກໄດ້
- ມີຄວາມຮູ້ພື້ນຖານທາງດ້ານພາສາອັງກິດ
- ມີຄວາມຮູ້ພື້ນຖານທາງດ້ານ Computer  ແລະ Microsoft Office ໄດ້ເປັນຢ່າງດີ
- ມີສຸຂະພາບແຂງແຮງ ທີ່ສາມາດເຮັດວຽກຢູ່ໃນສະພາບແວດລ້ອມໂຮງງານໄດ້
- ສາມາດເຮັດວຽກພາຍໃຕ້ຄວາມກົດດັນ ແລະ ເຮັດວຽກເປັນທີມໄດ້
- ສາມາດເຮັດວຽກເປັນກະ ແລະ ລ່ວງເວລາໄດ້

## ຫຼັກຈັນຍາບັນວັດທະນະທຳແຫ່ງການເຕີບໂຕຂອງພວກເຮົາ

- ປະຕິບັດຕາມແນວທາງແຊມເປີ ອາຣເດັນ
- ມີພະລັງບວກ ແລະ ເອື້ອເຟື້ອເຜື່ອແຜ່
- ເອົາໃຈໃສ່ ແລະ ເຂົ້າໃຈຄວາມຕ້ອງການຂອງຜູ້ບໍລິໂພກ
- ຕັດສິນໃຈໄວ ແລະ ເຮັດໃຫ້ເປັນເລີດ
- ໃຫ້ສິດ, ສົ່ງເສີມ ແລະ ພັດທະນາບຸກຄະລາກອນໃຫ້ມີຄວາມກ້າວໜ້າ

## ວິທີສະໝັກ:

ສົ່ງ CV  ແລະ Cover letter (ລ່າສຸດເປັນພາສາອັງກິດ) ສະໝັກມາທີ່ເມວ recruitment@beerlao.la ກ່ອນວັນປິດຮັບສະໝັກທີ **08 ມິຖຸນາ 2026** ຫຼື ໂທສອບຖາມລາຍລະອຽດເພີ່ມເຕີມທີ່ເບີ 02056556272.

ໝາຍເຫດ: ສະເພາະຜູ້ທີ່ຜ່ານການຄັດເລືອກເທົ່ານັ້ນທີ່ຈະໄດ້ຮັບການຕິດຕໍ່ເພື່ອເຂົ້າສຳພາດ

## BREWING FOR A BETTER TODAY AND TOMORROW

For us success has always been in the diverse mix of our people, our beers and our brands. At Carlsberg, we want to recruit and develop people with a global mindset, cultural understanding, and international experience to ensure that our organization stays agile, inclusive, and prepared for future growth.

Only by acknowledging and harvesting from different perspectives and experiences, will we gain competitive advantage and leverage the effect of diversity for business growth. Carlsberg aims to create equal access to opportunity regardless of social identity, and we encourage everyone to apply regardless of gender, nationality, race, religion or any other characteristics protected by law.